# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 7 ພຶສພາ 2017 (5-7-2017)

---

## ຊີວິດ ຢູ່ທີ່ເຮືອນ

*ແມ່ນຫຍັງທີ່ທ່ານມັກທີ່ສຸດກ່ຽວກັບເຮືອນຂອງທ່ານ ?*

**ຈຸດສໍາຄັນໃນບົດຮຽນ**: ເຮືອນເປັນລັກສະນະທີ່ຊັດແຈ້ງຂອງເຮົາໃນການດໍາຣົງຊີວິດໃນພຣະຄຣິດ
**ພຣະຄັມພີຕອບສນອງຕໍ່ຊີວິດ**: ເຮືອນ. ສໍາລັບຄົນສ່ວນຫຼາຍແລ້ວ, ຄໍາເວົ້າຄໍາດຽວນັ້ນສາມາດເຮັດໃຫ້ຄວາມຮູ້ສຶກທີ່ດີເກີດຂຶ້ນ ເຊັ່ນວ່າ: ຄວາມຮູ້ສຶກອົບອຸ່ນໃຈ, ຄວາມປອດພັຍ, ແລະ ແມ້ກະທັ້ງຄວາມປາຖນາດີໆອີກດ້ວຍ.

ເຖິງຢ່າງໃດກໍຕາມ, " ບໍ່ມີບ່ອນໃດຄືກັບເຮືອນ."

ບໍ່ວ່າເຮົາຈະຢູ່ທີ່ໃດ ຫຼື ໃນຣະດູການໃດຂອງຊີວິດຊຶ່ງພວກເຮົາເອງກໍາລັງດື່ມດໍ່າຢູ່, ເຮືອນນແມ່ນບ່ອນນັ້ນ ບ່ອນທີ່ເຮົາສາມາດພັກພາ ແລະອາສັຍທີ່ດີທີ່ສຸດ, ແຫ່ງນັ້ນກໍຄືເຮືອນ. ແມ່ນຍາມເຮົາຢູ່ເຮືອນນັ້ນເອງທີ່ເປີດເຜີຍວ່າເຮົາເປັນໃຜກັນແທ້ ແລະຊີ້ບອກວ່າມີຄວາມສໍາຄັນຫຍັງຕໍ່ເຮົາ. ພວກເຮົາອາດທໍາທ່າເປັນຄຣິສຕຽນໃນໂບດ, ແຕ່ເປັນໄປບໍ່ໄດ້ທີ່ເຮົາຈະປອມເປັນຄຣິສຕຽນຢູ່ເຮືອນ. ເຮືອນ ບ່ອນຊຶ່ງຄົນທີ່ເຮົາຮັກທີ່ສຸດໄດ້ສັມຜັດກັບຊີວິດຂອງເຮົາກ່ອນຄົນອື່ນ.
ບໍ່ວ່າສະຖານນະການຂອງເຮົາຈະເປັນຢ່າງໃດໃນເວທີຊີວິດຂອງເຮົາ, ພຣະເຢຊູຢາກໃຫ້ເຮົາເປັນສະມາຊິກທີ່ດີທີ່ສຸດຂອງຄອບຄົວເທົ່າທີ່ເຮົາສາມາດເປັນໄດ້. ຂອບຄຸນພຣະເຈົ້າ, ພຣະອົງບໍ່ໄດ້ປ່ອຍໃຫ້ເຮົາວາດພາບເອົາເອງວ່າມັນຈະເປັນຮູບແບບໃດ. ໃນຖານະທີ່ເປັນສາວົກຂອງພຣະເຢຊູ, ເອກະລັກຂອງເຮົາແມ່ນຢູ່ໃນພຣະຄຣິດ ແລະເອກະລັກນັ້ນສາມາດເຫັນໄດ້ຈາກບັນຍາກາດແຫ່ງຄວາມຮັກ, ການຍິນຍອມ, ແລະການເຊື່ອຟັງ ທີ່ມີພຣະຄຣິດເປັນສູນກາງຢູ່ໃນເຮືອນນັ້ນ.

**ພຣະຄັມພີກ່າວວ່າຢ່າງໃດ** : ( ເບິ່ງຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ເອເຟໂຊ 5:22-24</u>** :
*22 ຝ່າຍພັຣຍາ ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນ ເໝືອນຍອມຟັງອົງພຣະຜູ້ເປັນເຈົ້າ 23 ເພາະວ່າສາມີເປັນສີສະຂອງພັຣຍາ ເຫມືອນພຣະຄຣິດຊົງເປັນປະມຸກຂອງຄຣິສຕະຈັກຊຶ່ງເປັນພຣະກາຍຂອງພຣະອົງ ແລະພຣະອົງຊົງເປັນຜູ້ໂຜດໃຫ້ຄຣິສຕະຈັກນັ້ນພົ້ນ*

ທ່ານໂປໂລ ໄດ້ເລີ້ມຕົ້ນດ້ວຍຂໍ້ພຣະຄໍາເຫຼົ່ານີ້ວ່າ: "ຝ່າຍພັລຍາ,ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນເໝືອນຍອມຟັງອົງພຣະຜູ້ເປັນເຈົ້າ. " ວັທນະທັມສມັຍໃໝ່ທົ່ວເຍາະເຍີ້ຍປັນຍາແບບນີ້, ໂດຍກ່າວວ່າມັນເກົ່າແກ່ ແລະບໍ່ມີອີກແລ້ວ. ທ່ານອາດລະອາຍໃຈເມື່ອທ່ານອ່ານບົດນີ້. ສັງຄົມທົ່ວໄປມັກຈະແນມເຫັນວ່າຄົນທີ່ຍອມຢູ່ໃຕ້ບັງຄັບເປັນຄົນອ່ອນແອ.

ແຕ່ພຣະເຈົ້າຕັ້ງໃຈໃຊ້ຂໍ້ພຣະຄຳເຫຼົ່ານີ້ເປັນຄຳເຊື້ອເຊີນໃຫ້ຮັບເອົາພຣະພອນ.

ດັ່ງດຽວກັບພຣະເຈົ້າໄດ້ອວຍພອນຄຣິສຕະຈັກໂດຍທາງພຣະຄຣິດທີ່ຊົງເປັນປະມຸກ, ພຣະເຈົ້າກໍປະສົງອວຍພອນທຸກໆຄອບຄົວໂດຍທາງຜູ້ນຳເຊັ່ນກັນ. ສຳລັບຄອບຄົວທີ່ມີສາມີໃນເຮືອນນັ້ນ, ພຣະເຈົ້າໄດ້ແຕ່ງຕັ້ງເພິ່ນໃຫ້ເປັນຜູ້ນຳຄອບຄົວ. ຂໍ້ຄວາມນີ້ກໍແຈ່ມແຈ້ງສໍ່າໆກັນກັບວັທນະທັມຂອງເຮົາທີ່ສັບສົນ(ບໍ່ຮູ້ວ່າອັນໃດເປັນອັນໃດ). ພຣະເຈົ້າໄດ້ອອກແບບໃຫ້ຄອບຄົວເປັນແລະຈະເປັນເໝືອນດັ່ງພວງມາລັຍທີ່ມີແຕ່ສອງມືຈັບເທົ່ານັ້ນ. ມັນຈະເປັນອັນຕະລາຍຢ່າງໃຫຍ່ຫຼວງ ຖ້າມີສີ່ມືຈັບພວງມາລັຍ, ສໍ່າບໍ່ມີມືຈັບ.

ກ່ອນອື່ນ ໃຫ້ເຮົາເບິ່ງຄຳວ່າຍອມຢູ່ໃຕ້ບັງຄັບໃນຂໍ້ຄວາມຕໍ່ໄປ. ໃນຖານະທີ່ເປັນຄຣິສຕຽນ, ພວກເຮົາທຸກຄົນຖືກເອີ້ນໃຫ້ຍອມຢູ່ໃຕ້ບັງຄັບພຣະຄຣິດ. ການເປັນຄຣິສຕຽນແມ່ນການເປັນຜູ້ທີ່ຍອມຮັບ ແລະ ຮັບຮູ້ການຊົງເປັນອົງພຣະຜູ້ເປັນເຈົ້າຂອງພຣະເຢຊູ. ດັ່ງນັ້ນພັລຍາຜູ້ຊຶ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນກໍຍອມໃຫ້ການແຕ່ງງານຢູ່ໃຕ້ບັງຄັບຂອງພຣະຄຣິດ. ເຫດສະນັ້ນ ທ່ານໂປໂລຈຶ່ງກ່າວວ່າ ພັລຍາຍອມຢູ່ໃຕ້ບັງຄັບສາມີຂອງຕົນ "ເໝືອນຍອມຟັງອົງພຣະຜູ້ເປັນເຈົ້າ." ການສົມຍອມບໍ່ແມ່ນພຶດຕິກັມໂດຍທັມຊາດສຳລັບເຮົາ. ມັນບໍ່ງ່າຍຈັກເທື່ອ, ແຕ່ມັນເປັນສິ່ງຄາດຫວັງ ພັລຍາທີ່ຍິນຍອມຕໍ່ສາມີຂອງລາວ ກໍຍອມມອບການສົມຣົດຂອງລາວໃຫ້ພຣະເຈົ້າ. ນັ້ນບໍ່ໄດ້ໝາຍຄວາມວ່າພັລຍາວາງໃຈເຊື່ອໃນສາມີຂອງນາງ; ແທນທີ່ຈະເຮັດດັ່ງນັ້ນ, ນາງວາງໃຈໃນໃນພຣະເຢຊູໃຫ້ນຳພາສາມີຂອງຕົນ.

| |
|---|
| ***ການໂຕ້ຕອບໃນເບື້ອງຕົ້ນຂອງທ່ານຕໍ່ຂໍ້ພຣະຄຳເຫຼົ່ານີ້ແມ່ນຫຍັງ ?*** |

ໃນທຳນອງດຽວກັນ ການຍິນຍອມບໍ່ໄດ້ໝາຍຄວາມວ່າມິດຢູ່. ຂ້າພະເຈົ້າເພິ່ງພັລຍາຂອງຂ້າພະເຈົ້າເໝືອນແຫຼ່ງປັນຍາແລະເປັນເຄື່ອງສຽງທີ່ເປັ່ງສຽງສຳລັບສິ່ງທີ່ຂ້າພະເຈົ້າຄິດ. ຂ້າພະເຈົ້າຄອງຖ້າຄວາມຄິດເຫັນຂອງນາງ ແລະໃຫ້ຄຸນຄ່າຄວາມຄິດຂອງນາງສູງ ແລະເຂົ້າໃຈນາງດີ. ຂ້າພະເຈົ້າແຕ່ງງານກັບຍິງທີ່ວິເສດ, ແລະຂ້າພະເຈົ້າກໍເປັນຄົນໂງ່ທີ່ບໍ່ຍອມຟັງຄຳແນະນຳຂອງນາງ.

ດັ່ງທີ່ຄຣິສຕະຈັກຍອມຢູ່ໃຕ້ບັງຄັບພຣະຄຣິດສັນໃດ " ພັລຍາຄວນຍອມຢູ່ໃຕ້ບັງຄັບສາມີໃນທຸກສິ່ງສັນນັ້ນ." ຍິນຍອມໃນທຸກສິ່ງ" ບໍ່ໄດ້ລວມເຖິງສິ່ງທີ່ຜິດ. ພຣະເຈົ້າບໍ່ໄດ້ຄາດຫວັງໃຫ້ພັລຍາສົມຮູ້ຮ່ວມຄິດໃນຄວາມບາບ. ຖ້າຄວາມປາຖນາ, ການເລືອກ, ຫຼືຄຳຂໍຮ້ອງຂອງສາມີຜິດ, ມັນເປັນໜ້າທີ່ປະການແລກຂອງພັລຍາ ແລະສຳຄັນທີ່ສຸດຕ້ອງຍອມຟັງພຣະຄຣິດ.

ໃນທາງນີ້, ການຍອມກໍບໍ່ແມ່ນທ່າທີເມີນເສີຍຈັກເທື່ອ. ມັນເປັນການເລືອກທີ່ຈະດຳລົງຊີວິດເຊື່ອພຣະຄຣິດ. ດັ່ງທີ່ຈະໄດ້ເຫັນພຣະເຢຊູເປັນຜູ້ນຳ ແລະເປັນສີສະສູງກວ່າທຸກສິ່ງໂດຍສະເພາະສູງກວ່າສາມີທັງຫຼາຍ.

**2. <u>ເອເຟໂຊ 5:25-28</u>** :

*[25]ຝ່າຍສາມີ, ຈົ່ງຮັກພັລະຍາຂອງຕົນ ເໝືອນດັ່ງພຣະຄຣິດໄດ້ຊົງຮັກຄຣິສຕະຈັກ ແລະຊົງສະລະພຣະອົງເອງເພື່ອຄຣິສຕະຈັກ. [26]ເພື່ອຊົງຕັ້ງຄຣິສຕະຈັກນັ້ນໄວ້ສຳລັບພຣະເຈົ້າໂດຍການຊົງຊຳຮະດ້ວຍນ້ຳກັບດ້ວຍຖ້ອຍຄຳ. [27]ເພື່ອພຣະອົງນັ້ນຈະໄດ້ຮັບຄຣິສຕະຈັກສຳລັບພຣະອົງເອງ ຄືຄຣິສຕະຈັກທີ່ມີສະງ່າຣາສີ, ບໍ່ມີຈຸດດ່າງພ້ອຍຫລືຮອຍໜັງຫ່ຽວ, ແລະສິ່ງອື່ນໃນທຳນອງນັ້ນ ເພື່ອຄຣິສຕະຈັກຈະບໍຣິສຸດບໍ່ມີຕຳໜິ. [28]ຢ່າງນັ້ນແຫລະ, ສາມີຈຶ່ງຄວນຮັກພັລະຍາຂອງຕົນເໝືອນກັບຮັກກາຍຂອງຕົນເອງຜູ້ທີ່ຮັກພັນລະຍາຂອງຕົນກໍຮັກຕົນເອງ.*

| |
|---|
| ***ຂໍ້ພຣະຄັມພີເຫຼົ່ານີ້ ຄ້າຍຄືແລະກົງກັນຂ້າມກັບສາມີຢ່າງໃດ ຊຶ່ງພວກເຮົາເຫັນໃນໜັງແລະທີວີທຸກວັນນີ້?*** |

ສຳລັບຂ້າພະເຈົ້າແລ້ວ, ການກາຍເປັນສາມີນັ້ນງ່າຍ. ແຕ່ເຖິງຢ່າງນັ້ນກໍຕາມ, ການກາຍເປັນສາມີໃນພຣະເຈົ້າ

ນັ້ນຍ່ອມມີການທ້າທາຍຢ່າງໃຫຍ່ຫຼວງໃນຊີວິດຂອງຂ້າພະເຈົ້າ. ແລະເວົ້າແຈ້ງໆແລ້ວ: ຂ້າພະເຈົ້າກໍບໍ່ໄດ້ເປັນສາມີໃນພຣະເຈົ້າສເມີໄປ. ພັລຍາຂອງຂ້າພະເຈົ້າໄດ້ອົດກັ້ນຕໍ່ຄວາມເຫັນແກ່ຕົວຂອງຂ້າພະເຈົ້າ ແລະໄດ້ເຫັນຄວາມຊົ່ວຮ້າຍທີ່ສຸດຂອງຂ້າພະເຈົ້າອີກດ້ວຍ.

ເຖິງປານນັ້ນ ພວກເຮົາກໍໄດ້ສລອງການແຕ່ງງານ 20 ກວ່າປີຜ່ານມາ. ມັນເກີດຂຶ້ນໄດ້ຢ່າງໃດ? ການແຕ່ງງານຂອງພວກເຮົາບໍ່ພຽງແຕ່ໃຫ້ຢູ່ລອດເທົ່ານັ້ນ, ແຕ່ວ່າມັນເຕີບໃຫຍ່ຂຶ້ນຍ້ອນຄວາມຈິງຢ່າງນຶ່ງຄື: ຂ້າພະເຈົ້າຮຽນຮູ້ທີ່ຈະຕາຍຕໍ່ຕົນເອງ. ຂ້າພະເຈົ້າຮຽນຮູ້ທີ່ຈະຕາຍຕໍ່ຕົນເອງໂດຍການສຶກສາຊີວິດ ແລະການສິ້ນພຣະຊົນຂອງພຣະເຢຊູ. ຜູ້ຊາຍທ່ານໃດຢາກກາຍເປັນສາມີທີ່ພຣະເຈົ້າຢາກໃຫ້ເປັນ ຕ້ອງສຶກສາ ແລະຮຽນປະຕິບັດຕາມແບບຢ່າງຊີວິດຂອງພຣະເຢຊູ. ທ່ານອັຄສາວົກໂປໂລ ສັ່ງສາມີໃຫ້ "ຮັກພັລຍາຂອງທ່ານ, ດັ່ງພຣະຄຣິດຊົງຮັກຄຣິສຕະຈັກ ແລະ ສລະພຣະອົງເອງເພື່ອຄຣິສຕະຈັກ." ພຣະເຢຊູຮັກເຮົາ ແລະຢາກໃຫ້ສິ່ງດີທີ່ສຸດແກ່ເຮົາ. ສໍາລັບພຣະຄຣິດແລ້ວ, ສິ່ງທີ່ດີທີ່ສຸດແກ່ເຮົາແມ່ນໝາຍເຖິງການສິ້ນພຣະຊົນເທິງໄມ້ກາງແຂນ, ໂດຍທາງການເສັຽສລະນັ້ນ ພວກເຮົາຈຶ່ງໄດ້ຮັບການອະພັຍ ແລະ ໄດ້ຮັບຊີວິດອັນຕລອດໄປເປັນນິດ.

ພຣະຄຣິດໄດ້ຊົງຍອມຢູ່ໃຕ້ບັງຄັບພຣະບິດາ ແລະຊົງຍອມຕາຍເພື່ອຜົນປໂຍດຂອງເຮົາ ເພື່ອຈະໄດ້ນໍາເຮົາຄືນຫາພຣະອົງ ແລະເຮັດໃຫ້ເຮົາ "ປາສຈາກຈຸດດ່າງພ້ອຍ ຫຼືຮອຍຕໍາໜິ ຫຼື ສິ່ງໃດໆໃນທໍານອງນັ້ນ, ແຕ່ໃຫ້ບໍຣິສຸດແລະບໍ່ມີທີ່ຕິ." ຈັ່ງແມ່ນການເສັຽສລະທີ່ເຫຼືອເຊື່ອທີ່ສຸດເພື່ອເຮົາ! ໃນທໍານອງດຽວກັນ, ສາມີຄວນເສັຽສລະຕົນເອງ ເພື່ອຮັບປະກັນວ່າພັລຍາຈະກາຍເປັນຜູ້ທີ່ພຣະເຈົ້າຢາກໃຫ້ນາງເປັນ. ເມື່ອສາມີຮັກພັລຍາຂອງລາວ ໃນທິດທາງທີ່ພຣະຄຣິດຊົງຮັກລາວ, ແມ່ນລາວຍອມເສັຽສລະຄວາມປາຖນາຂອງຕົນເອງ ເພາະເຈຕະນາຢາກໃຫ້ສິ່ງດີທີ່ສຸດແກ່ພັລຍາຂອງລາວ. ໂດຍທົ່ວໄປແລ້ວ, ນີ້ແມ່ນການຍອມຢູ່ໃຕ້ບັງຄັບພຣະຄຣິດ, ເພາະວ່າ ສາມີໄດ້ຖືເອົາຄວາມຕ້ອງການຂອງຄົນອື່ນມາກ່ອນຄວາມຕ້ອງການຂອງຕົນ.

ໃນເມື່ອສາມີຮັກພັລຍາຂອງຕົນດັ່ງທີ່ພຣະຄຣິດຊົງຮັກຄຣິສຕະຈັກ, ເພິ່ນກໍຈະເປັນແບບຢ່າງການຍອມແກ່ຄອບຄົວຂອງເພິ່ນ. ສາມີຕ້ອງຍອມຢູ່ໃຕ້ບັງຄັບພຣະຄຣິດສັນໃດ, ພັລຍາກໍຍອມຢູ່ໃຕ້ບັງຄັບສາມີສັນນັ້ນ. ສາມີບໍ່ສາມາດນໍາພາພັລຍາໃຫ້ມີການປະພຶດຖວາຍກຽດແດ່ພຣະຄຣິດໄດ້ ຖ້າບໍ່ມີໃຈສະແດງອອກດ້ວຍຕົວເອງກ່ອນ. ເມື່ອຂ້າພະເຈົ້າຍອມຕໍ່ພຣະຄຣິດພັລຍາຂອງຂ້າພະເຈົ້າກໍວາງໃຈຂ້າພະເຈົ້າ. ໂດຍການພາຜູ້ອື່ນຍອມຢູ່ໃຕ້ບັງຄັບ, ແມ່ນຂ້າພະເຈົ້າຍົກຊູການຍອມຢູ່ໃຕ້ບັງຄັບຂອງນາງຂຶ້ນ.

ຄວາມຮັກແລະການຍອມຢູ່ໃຕ້ບັງຄັບທີ່ທ່ານໂປໂລໄດ້ຍົກຂຶ້ນມາໃນຂໍ້ 22-28 ບໍ່ພຽງແຕ່ເປັນຜົນດີຕໍ່ຄູ່ສົມຣົດເທົ່ານັ້ນ, ມັນຍັງມີອິດທິພົນຕໍ່ຄົນອື່ນໆທີ່ໄດ້ເຫັນຄວາມສັມພັນ ແລະການກະທໍາຂອງລາວອີກດ້ວຍ. ແລະບໍ່ມີໃຜທີ່ຈະໄດ້ຮັບຜົນກະທົບລື່ນກວ່າລູກຂອງລາວດອກ. ຍິ່ງໄປກວ່ານັ້ນ ພວກລູກບໍ່ພຽງແຕ່ຮຽນເຮັດຕາມສິ່ງທີ່ພໍ່ແມ່ເວົ້າເທົ່ານັ້ນ,

***ແມ່ນໃຜມີບົດບາດເປັນແບບຢ່າງອັນດີໃນການເສັຽສລະແລະຍອມຢູ່ໃຕ້ບັງຄັບຕາມພຣະຄັມພີ ໃນຊີວິດທ່ານ ?***

## 3. ເອເຟໂຊ 6:1-3:

*1 ຝ່າຍບຸດທັງຫຼາຍ, ຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນ ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ເພາະເຮັດແນວນັ້ນ*
*ເປັນການຖືກຕ້ອງ. 2 "ຈົ່ງນັບຖືບິດາມານດາຂອງຕົນ" ນີ້ເປັນພຣະບັນຍັດຂໍ້ຕົ້ນທີ່ມີພຣະສັນຍາໄວ້ດ້ວຍ, 3 ຄື "ເພື່ອ*
*ເຈົ້າຈະຢູ່ເຢັນເປັນສຸກແລະ ມີອາຍຸໝັ້ນຍືນທີ່ແຜ່ນດິນນີ້."*

ໃນຖານະທີ່ເປັນລູກຜູ້ນຶ່ງ ຂ້າພະເຈົ້າບໍ່ເຂົ້າໃຈຣະບຽບຫຼາຍຢ່າງທີ່ພໍ່ແມ່ຂ້າພະເຈົ້າໄດ້ຕັ້ງໄວ້. ຂ້າພະເຈົ້າປະພຶດ

ຕາມທຸກຂໍ້ຄຳສັ່ງຂອງພໍ່ແມ່ຂ້າພະເຈົ້າຢ່າງເຄັ່ງຂັດ ແລະຮ້ອງຂໍດ້ວຍຄຳນຶ່ງວ່າ: "ເປັນຫຍັງ?" ພໍ່ແມ່ຂອງຂ້າພະເຈົ້າມັກຈະຕອບດ້ວຍຄຳວ່າ, "ເພາະພໍ່ເວົ້າແລ້ວ!" (Because I said so!) ມັນເປັນທັມຊາດທີ່ລູກຖາມຄຳວ່າ "ເປັນຫຍັງ", ແລະ ການສື່ສານທີ່ດີເປັນພາກສ່ວນທີ່ຍິ່ງໃຫຍ່ຂອງການລ້ຽງດູລູກໃຫ້ເກີດຜົນດີ. ແລະໃນທີ່ສຸດ ລູກກໍມີຄວາມຮັບຜິດຊອບໃນການເຊື່ອຟັງສິ່ງພໍ່ແມ່ບອກ. ຂໍ້ບັນຍັດບໍ່ແມ່ນໃຫ້ເຊື່ອຟັງຍ້ອນພໍ່ແມ່ສົມບູນ, ແຕ່ຍ້ອນພຣະຄຣິດສົມບູນ.

ແນ່ນອນ, ການຟັງຄວາມພໍ່ແມ່ເປັນຂໍ້ບັນຍັດສຳລັບລູກຢູ່ໃນເຮືອນ, ແຕ່ສິ່ງນັ້ນມັນກ່ຽວຂ້ອງຫຍັງກັບເຮົາ? ພວກເຮົາເປັນຜູ້ໃຫຍ່ແລ້ວດຽວນີ້! ຄວາມປາຖນາຂອງພໍ່ແມ່ເຮົາແມ່ນເພື່ອຊ່ອຍເຮົາໃຫ້ເຕີບໂຕເປັນຜູ້ໃຫຍ່ຢ່າງເຕັມສ່ວນທີ່ດຳຣົງຊີວິດຢ່າງອິສຣະພາບແລະມີຄວາມຮັບຜິດຊອບ. ເມື່ອເຮົາມາເຖິງຈຸດນີ້ ແລະອອກໄປຢູ່ດ້ວຍຕົວເອງ, ຄວາມສັມພັນຂອງພວກເຮົາຕໍ່ເພິ່ນອາດປ່ຽນໄປ ແຕ່ພາຣະການໃຫ້ກຽດເພິ່ນບໍ່ປ່ຽນແປງ. ການໃຫ້ກຽດຈະບໍ່ອອກໄປຈາກວິຖີຊີວິດຂອງເຮົາ.

ການຕັດສິນໃຈໃຫ້ກຽດແກ່ພໍ່ແມ່ຂອງເຮົາບໍ່ເຄີຍຂາດຫົນຈັກເທື່ອ: *" ເພື່ອເຈົ້າຈະຢູ່ເຢັນເປັນສຸກ ແລະມີອາຍຸໝັ້ນຍືນທີ່ແຜ່ນດິນນີ້."* ທ່ານໂປໂລ ໄດ້ຢ້ຳເຕືອນເຮົາວ່າພຣະເຈົ້າຈະອວຍພອນເຮົາເມື່ອເຮົາໃຫ້ກຽດພໍ່ແມ່ຂອງເຮົາ.

ການໃຫ້ກຽດນັ້ນເປັນຢ່າງໃດ? ມັນຍິ່ງກວ່າບັດອວຍພອນວັນພໍ່ ວັນແມ່ ເສັຽອີກ. ມັນຍິ່ງກວ່າພວງດອກໄມ້ທີ່ເຮົາເອົາໄປວາງເທິງຫລຸມຝັງສົບອີກ. ພວກເຮົາຄວນໃຫ້ກຽດເພື່ອສະແດງຄວາມກະຕັນຍູຕໍ່ພໍ່ແມ່ເຮົາແທນ. ຊຶ່ງຈະເຫັນໄດ້ຈາກສິ່ງທີ່ເຮົາປະພຶດກະທຳເມື່ອເວລາເຮົາຢູ່ນຳເພິ່ນເຊັ່ນ ພວກເຮົາເວົ້ານຳເພິ່ນຢ່າງໃດ ຫລືຕອບສນອງຕໍ່ຄຳແນະນຳຂອງເພິ່ນ, ແລະພວກເຮົາເວົ້າກ່ຽວກັບເພິ່ນຢ່າງໃດ.

ໃນຂນະທີ່ເຮົາສແວງຫາການດຳຣົງຊີວິດຕາມລັກສະນະພຣະຄຣິດ, ພວກເຮົາບໍ່ພຽງແຕ່ທຳຕົວເປັນສາມີ, ພັລຍາ, ພໍ່ແມ່, ຫລືລູກແບບຕື້ນໆ ເຜີນໆ. ແຕ່ເຮົາເຮັດໃນຖານະທີ່ເຮົາເປັນສາວົກຂອງພຣະເຢຊູ ແລະພວກເຮົາດຳຣົງຊີວິດໂດຍການຍອມຟັງພຣະຄຣິດ ໃນການດຳຣົງຊີວິດຢູ່ເຮືອນ.

| ***ຂໍ້ພຣະທັມເຫຼົ່ານີ້ນຳໃຊ້ຕໍ່ສະພາບການຂອງທ່ານໃນປັດຈຸບັນນີ້ຢ່າງໃດ ?*** |
|---|

## ນຳໃຊ້ໃນຊີວິດ

ທ່ານຈະດຳຣົງຊີວິດຕາມລັກສະນະພຣະຄຣິດຢູ່ເຮືອນໃນມື້ຊິມາເຖິງນີ້ຢ່າງໃດ? ຈົ່ງພິຈາຣະນາເບິ່ງຄຳແນະນຳຕໍ່ໄປນີ້ເພື່ອເລີ່ມຕົ້ນ :

- **ການຍອມຢູ່ໃຕ້ບັງຄັບ.** ຈົ່ງເລີ້ມແຕ່ລະເຊົ້າດ້ວຍການຍອມຕໍ່ພຣະຄຣິດ ຢ່າງຂຍັນຂັນແຂງ ແລະຕັ້ງອົກຕັ້ງໃຈ. ຈົ່ງຍອມຮັບດ້ວຍປາກວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າ ແລະເປັນເຈົ້ານາຍຂອງທ່ານ.
- **ຄວາຮັກ.** ຈົ່ງຊອກສແວງຫາໂອກາດສະແດງຄວາມຮັກດ້ວຍການເສັຽສລະຕົນເອງຕໍ່ຜູ້ໃດຜູ້ນຶ່ງໃນຊີວິດທ່ານເຊັ່ນວ່າ ຄູ່ຄອງຂອງທ່ານ, ເພື່ອນຂອງທ່ານ, ເພື່ອນບ້ານຂອງທ່ານ, ແລະ ຄົນຕໍ່ໆໄປ. ຈົ່ງສະແດງຄວາມຮັກຂອງທ່ານ ທັງວາຈາ ແລະ ການກະທຳພ້ອມ.
- **ການໃຫ້ກຽດ.** ເຖິງແມ່ນຈະເປັນຜູ້ໃຫຍ່ແລ້ວກໍຕາມ, ພວກເຮົາຍັງຖືກເອີ້ນໃຫ້ ໃຫ້ກຽດແກ່ພໍ່ແມ່ຂອງເຮົາ. ຈົ່ງສະແດງການໃຫ້ກຽດແກ່ພໍ່ແມ່ຂອງທ່ານໂດຍທາງການປະຕິບັດໃນອາທິດນີ້.

ບໍ່ມີບ່ອນໃດຈະສເມີເໝືອນເຮືອນເຮົາແນ່ນອນ. ມັນເໝືອນເປັນບ່ອນທ່ານຮູ້ສຶກສະບາຍໃຈທີ່ສຸດ ເປັນຕົວຂອງຕົວເອງທີ່ສຸດ. ດ້ວຍເຫດຜົນນັ້ນ, ຈົ່ງແນ່ໃຈວ່າ ເຮືອນຂອງທ່ານສະທ້ອນລັກສະນະຂອງທ່ານໃນຖານະທີ່ເປັນສາວົກຂອງພຣະເຢຊູຜູ້ນຶ່ງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**